**ບົດຮຽນໂຮງຮຽນວັນອາທິດ**

ວັນອາທິດ ທີ 23 ເມສາ 2023 (04-23-2023)

## ການທົດລອງທີ່ເອື່ອຍອີງໃສ່ຕົວເຮົາເອງແທນທີ່ຈະເປັນພຣະເຈົ້າ

*ທຸຣະກິດຫຼືການໂຄສະນາອັນໃດທີ່ລໍ້ລວງທ່ານໄດ້ດີທີ່ສຸດ?*

**ຈຸດສຳຄັນໃນບົດຮຽນ: ການປະທານໃຫ້ຂອງພຣະເຈົ້າແມ່ນດີກວ່າສິ່ງທີ່ພວກເຮົາພະຍາຍາມເຮັດເພື່ອເຮົາເອງສເມີ.**

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ພວກໂຄສະນາມັກຈະເຮັດໃຫ້ເຫັນພາບຕົວເຮົາເອງເປັນສ່ວນນຶ່ງຂອງຍຸດທະສາດການຕລາດຂອງເຂົາເຈົ້າ. ພວກເຮົາຈະມີຄວາມສຸກກວ່າຖ້າພວກເຮົາຫາກຂັບຣົດຄັນນີ້ຫຼືເຂົ້າຮ່ວມສະໂມສອນນີ້. ໃນສອງສາມປີຜ່ານມານີ້, ຄວາມພໍໃຈກະທັນຫັນໄດ້ກາຍເປັນຫຼາຍກວ່າພຽງແຕ່ການກະຕຸ້ນເພື່ອຂໍຮ້ອງຄວາມຮູ້ສຶກຂອງພວກເຮົາ; ມັນໄດ້ກາຍເປັນຄວາມເປັນຈິງແລ້ວ. ອິນເຕີເນັດໄດ້ກຳນົດການຊື້ແບບໃໝ່. ສື່ຂ່າວສານເຊັ່ນປຶ້ມແລະເພງກໍສາມາດດາວໂຫຼດໄດ້ແລະສນຸກກັບມັນໄດ້ທັນທີ. ການຊື້ອອນໄລນ໌ມັກຈະສາມາດຈັດສົ່ງໃຫ້ໃນມື້ຕໍ່ມາ, ແລະໃນບາງພື້ນທີ່ທ່ານສາມາດໄດ້ຮັບສິ່ງຂອງທີ່ທ່ານສັ່ງໃນມື້ດຽວກັນ. ຄວາມພໍໃຈກະທັນຫັນໄດ້ກາຍເປັນສິ່ງທີ່ຮີບດ່ວນຫຼາຍ!

ພວກໂຄສະນາບໍ່ແມ່ນຄົນທຳອິດທີ່ໃຊ້ກົນລະຍຸດນີ້. ຕັ້ງແຕ່ຕອນເລີ້ມຕົ້ນ, ຊາຕານໄດ້ໃຊ້ຄວາມພໍໃຈກະທັນຫັນໃນຖົງແຫ່ງການລໍ້ລວງຂອງມັນເພື່ອລໍ້ລວງພວກເຮົາໃຫ້ລົງໄປໃນເສັ້ນທາງທີ່ພວກເຮົາບໍ່ຈຳເປັນຕ້ອງເດີນທາງໄປ. ມານໃຊ້ມັນກັບອາດາມແລະເອວາ (ປະຖົມມະການບົດ 3), ມານໄດ້ພະຍາຍາມໃຊ້ມັນກັບພຣະເຢຊູ, ແລະມານຈະພະຍາຍາມໃຊ້ມັນກັບພວກເຮົາ. ເມື່ອພວກເຮົາເບິ່ງວິທີການທີ່ຊາຕານພະຍາຍາມໃຊ້ມັນກັບພຣະເຢຊູ, ພວກເຮົາສາມາດຮຽນຮູ້ທີ່ຈະໄວ້ວາງໃຈພຣະເຈົ້າແລະສິ່ງທີ່ພຣະອົງປະທານໃຫ້ແທນທີ່ຈະຕົກຢູ່ໃນການລໍ້ລວງເພື່ອຄວາມພໍໃຈໃຫ້ກັບຕົນເອງ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**ການສຶກສາພຣະຄັມພີ**

### 1. <u>ມັດທາຍ 4:1-4</u>

*1. ຕໍ່ມາພຣະວິນຍານໄດ້ຊົງພາພຣະເຢຊູເຂົ້າໄປໃນປ່າ ເພື່ອພຍາມານຈະໄດ້ທົດລອງພຣະອົງ. 2. ເມື່ອພຣະອົງຊົງອົດອາຫານເປັນເວລາສີ່ສິບວັນສີ່ສິບຄືນແລ້ວ ຫລັງຈາກນັ້ນພຣະອົງກໍຊົງຢາກອາຫານ. 3. ສ່ວນຜູ້ທົດລອງມາຫາພຣະອົງທູນວ່າ, "ຖ້າທ່ານເປັນພຣະບຸດຂອງພຣະເຈົ້າ ຈົ່ງສັ່ງກ້ອນຫີນເຫຼົ່ານີ້ໃຫ້ກາຍເປັນອາຫານ." 4. ຝ່າຍພຣະອົງຊົງຕອບວ່າ, "ມີຄຳຂຽນໄວ້ໃນພຣະຄັມພີວ່າ "ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານສິ່ງດຽວ ແຕ່ລ້ຽງດ້ວຍພຣະທັມທຸກຂໍ້ທີ່ອອກມາຈາກພຣະໂອດຂອງພຣະເຈົ້າ."*

ເພື່ອໃຫ້ການທົດລອງຂອງພຣະເຢຊູຕັ້ງຢູ່ໃນເນື້ອໃນໃຈຄວາມ, ພວກເຮົາຈຳເປັນຕ້ອງຈື່ຈຳວ່າມັດທາຍໄດ້ເລີ້ມຕົ້ນຂ່າວປະເສີດຂອງຕົນໂດຍການນຳສເນີພຣະເຢຊູເປັນຄຳຕອບສຳລັບການເປັນສະເລີຍຂອງອິສຣາເອນ. ອິສະຣາເອນໄດ້ຝ່າຝືນພັນທະສັນຍາກັບພຣະເຈົ້າເທື່ອແລ້ວເທື່ອອີກ. ເພາະຄວາມບາບຂອງເຂົາເຈົ້າ, ພຣະເຈົ້າໄດ້ຂັບໄລ່ເຂົາເຈົ້າອອກຈາກແຜ່ນດິນແຫ່ງພຣະສັນຍາ. ຫຼັງຈາກເຈັດສິບປີ, ພຣະເຈົ້າໄດ້ອະນຸຍາດໃຫ້ເຂົາເຈົ້າກັບຄືນໄປສູ່ແຜ່ນດິນ, ແຕ່ການຊົງສ້າງຕັ້ງຂຶ້ນໃໝ່ຢ່າງເຕັມສ່ວນຍັງຈະມາເຖິງ. ທ່ານມັດທາຍຊ່ວຍພວກເຮົາໃຫ້ເຫັນວ່າພຣະເຢຊູໄດ້ນຳເອົາການສ້າງຕັ້ງຂຶ້ນໃໝ່ນັ້ນໂດຍການຈັດລຳດັບເຊື້ອສາຍຂອງພຣະເຢຊູຈາກອັບຣາຮາມເຖິງ

ດາວິດ, ຈາກດາວິດເຖິງການຖືກເປັນສະເລີຍ, ແລະຈາກການຖືກເປັນສະເລີຍໄປຫາພຣະເຢຊູ (ມັດທາຍ 1:1-17).

ພວກເຮົາຍັງສາມາດເວົ້າໄດ້ວ່າການສ້າງຕັ້ງຂຶ້ນໃໝ່ຂອງອິສຣາເອນນີ້ປະກອບມີ "ການອົບພະຍົບໃໝ່." ໃນຄາວເກີດໃໝ່, ພຣະເຢຊູໄດ້ຖືກນາງມາຣີອາແລະໂຢເຊັບພາໄປປະເທດເອຢິບກ່ອນທີ່ຈະເຕີບໃຫຍ່ຢູ່ເມືອງນາຊາເຣັດ. ສິ່ງດັ່ງກ່າວໄດ້ບັນລຸຄຳພະຍາກອນຂອງໂຮເຊອາວ່າ, "ຄາວເມື່ອອິສຣາເອນຍັງເປັນເດັກນ້ອຍ, ເຮົາກໍຮັກແພງເຂົາ, ຕັ້ງແຕ່ຄາວເຮົານຳເຂົາອອກມາຈາກປະເທດເອຢິບ, ເຮົາໄດ້ເອີ້ນເຂົາວ່າບຸດຊາຍຂອງເຮົາ" (ໂຮເຊອາ 11:1). ພຣະເຢຊູເປັນ "ໂມເຊໃໝ່," ແລະໃນມັດທາຍ 4, ພວກເຮົາເຫັນພຣະອົງປະສົບການເວລາຂອງພຣະອົງເອງຢູ່ໃນຖິ່ນກັນດານ. ຢູ່ທີ່ນັ້ນພຣະອົງໄດ້ປະເຊີນກັບການທົດລອງ, ແຕ່ບໍ່ເໝືອນກັບຊາວອິສຣາເອນ, ພຣະອົງໄດ້ເຊື່ອຟັງ. ເປັນຕາໜ້າສົນໃຈຄືກັນທີ່ພຣະເຢຊູໄດ້ອົດອາຫານໃນຖິ່ນແຫ້ງແລ້ງກັນດານສີ່ສິບມື້ແລະສີ່ສິບຄືນ, ແມ່ນແຕ່ຊາວອິສຣາເອນກໍໄດ້ຢູ່ໃນຖິ່ນແຫ້ງແລ້ງກັນດານເປັນເວລາສີ່ສິບປີ.

ບໍ່ມີສິ່ງໃດເກີດຂຶ້ນກັບພຣະເຢຊູໂດຍບັງເອີນ. "ພຣະເຢຊູໄດ້ຖືກນຳພາໂດຍພຣະວິນຍານເຂົ້າໄປໃນຖິ່ນແຫ້ງແລ້ງກັນດານເພື່ອຖືກທົດລອງໂດຍມານ" (ຂໍ້ 1). ນີ້ແມ່ນແຜນການຂອງພຣະເຈົ້າ. ດ້ວຍແຜນການນີ້ຊາຕານໄດ້ພົບວິທີທີ່ຈະລໍ້ລວງພຣະເຢຊູ. ຫຼັງຈາກອົດອາຫານເປັນເວລາດົນນານ, ເຮົາບໍ່ຄວນແປກໃຈທີ່ພຣະເຢຊູຫິວເຂົ້າ. ແລະຊາຕານຫວັງວ່າຈະໃຊ້ສິ່ງນັ້ນເພື່ອປະໂຫຍດຂອງມັນ.

*ມີຫຍັງທີ່ກ່ຽວຂ້ອງໃນເວລາທີ່ພວກເຮົາໄດ້ຮັບການທົດລອງ?*

ນີ້ຄືທັມມະຊາດຂອງການລໍ້ລວງ: "ຖ້າທ່ານເປັນພຣະບຸດຂອງພຣະເຈົ້າ." ພຣະເຈົ້າໄດ້ປະກາດແລ້ວວ່າພຣະເຢຊູເປັນບຸດທີ່ຮັກ ແລະຊາຕານກໍໂຈມຕີໃນຈຸດນັ້ນ, ຄືກັບເວົ້າວ່າ, "ພິສູດເບິ່ງ! ຊາຕານພະຍາຍາມໃຫ້ພຣະເຢຊູທົດສອບພຣະບິດາ. ຊາຕານຢາກໃຫ້ພຣະເຢຊູເຮັດຕາມທີ່ຊາວອິສຣາເອນໄດ້ເຮັດແລະຕັ້ງຂໍ້ສົງສັຍກ່ຽວກັບການຈັດຕຽມຂອງພຣະເຈົ້າ. ມັນຄືກັບວ່າຊາຕານກຳລັງລໍ້ລວງພຣະເຢຊູໃຫ້ສົງສັຍວ່າ "ພຣະເຈົ້າຈະຈັດຫາໃຫ້ແທ້ໆບໍ?"

ຊາຕານກຳລັງຕັ້ງຄຳຖາມເຖິງຄວາມດີຂອງພຣະເຈົ້າ. ຖ້າມານສາມາດໃຫ້ພຣະເຢຊູສອບຖາມຄວາມດີຂອງພຣະບິດາໄດ້, ພຣະເຢຊູຄົງຈະຈັດຫາໃຫ້ພຣະອົງເອງ. ພຣະເຢຊູມີທາງເລືອກ: ວາງໃຈໃຫ້ພຣະບິດາສນອງທຸກຄວາມຕ້ອງການຂອງພຣະອົງຊຶ່ງລວມທັງອາຫານ, ຫຼືຈັດການເຣື່ອງນີ້ດ້ວຍພຣະອົງເອງ. ມັນມີບັນຫານຶ່ງທີ່ສຳຄັນຮວມຢູ່ນຳທີ່ນີ້. ເພື່ອຊ່ວຍມະນຸດຊາດໃຫ້ລອດແລະນຳການສ້າງຕັ້ງຂຶ້ນໃໝ່, ພຣະເຢຊູຕ້ອງເຮັດຕາມຄວາມຊອບທັມທັງໝົດແລະດຳເນີນຊີວິດຕາມທີ່ເຮົາບໍ່ສາມາດເຮັດໄດ້. ບໍ່ເໝືອນກັບຊາວອິສຣາເອນໃນຖິ່ນແຫ້ງແລ້ງກັນດານ, ພຣະເຢຊູຈະບໍ່ເອົາພຣະເຈົ້າເຂົ້າໃນການທົດລອງ. ພຣະອົງຕ້ອງປະເຊີນກັບການລໍ້ລວງເໝືອນກັບເຮົາຖືກ ແລະພຣະອົງບໍ່ເຮັດບາບ.

ມັນແມ່ນພຣະວິນຍານຂອງພຣະເຈົ້າທີ່ໄດ້ນຳພາພຣະເຢຊູໄປສະຖານທີ່ນີ້, ແລະພຣະອົງໄດ້ໄວ້ວາງໃຈພຣະບິດາເພື່ອສນອງທຸກສິ່ງທີ່ພຣະອົງຕ້ອງການ, ໂດຍອ້າງອີງຈາກພຣະບັນຍັດສອງບົດ 23, ພຣະເຢຊູໄດ້ປະກາດກັບຊາຕານວ່າ, "ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານສິ່ງດຽວແຕ່ລ້ຽງດ້ວຍພຣະທັມທຸກຂໍ້ທີ່ອອກມາຈາກພຣະໂອດຂອງພຣະເຈົ້າ." ການເຊື່ອຟັງແມ່ນດີກ່ວາອາຫານ.

## 2. <u>ພຣະບັນຍັດສອງ 8:2-5</u>

*2. ຈົ່ງລະນຶກວ່າ ພຣະຜູ້ເປັນເຈົ້າຂອງທ່ານໄດ້ຊົງນຳພາພວກທ່ານເດີນທາງຢູ່ໃນຖິ່ນກັນດານຕລອດສີ່ສິບປີນັ້ນເປັນຢ່າງໃດ ພຣະອົງຊົງທົດສອບທ່ານດ້ວຍຄວາມຍາກລຳບາກ ເພື່ອຢາກຈະຊົງຮູ້ວ່າຈິດໃຈຂອງພວກທ່ານເປັນຢ່າງໃດ ແລະທ່ານຈະເຊື່ອຟັງຂໍ້ຄຳສັ່ງສອນຂອງພຣະອົງຫລືບໍ່. 3. ພຣະອົງຊົງທຳໃຫ້ທ່ານອຶດຢາກ ແຕ່ຊົງປະທານມານາ ໃຫ້ພວກທ່ານກິນ ຊຶ່ງເປັນອາຫານທີ່ທ່ານແລະບັນພະບຸຣຸດຂອງພວກທ່ານບໍ່ເຄີຍກິນມາກ່ອນ ພຣະອົງຊົງກະທຳດັ່ງນີ້ກໍເພື່ອສອນທ່ານວ່າ ບໍ່ແມ່ນແຕ່ອາຫານທີ່ນັ້ນທີ່ໃຫ້ມະນຸດມີຊີວິດຢູ່ແລະມະນຸດຈຳເປັນຕ້ອງລ້ຽງຊີວິດດ້ວຍພຣະທັມທຸກຂໍ້ທີ່ອອກມາຈາກພຣະໂອດຂອງພຣະເຈົ້າ. 4. ໃນເວລາສີ່ສິບປີນັ້ນ ສົ້ງເສື້ອຂອງພວກທ່ານບໍ່ໄດ້ຂາດ ແລະຕີນບໍ່ໄດ້ໄຂ່ບວມ. 5. ຈົ່ງຈຳໄວ້ວ່າ ພຣະຜູ້ເປັນເຈົ້າຂອງພວກທ່ານຊົງຕີສອນແລະລົງໂທດທ່ານເຫມືອນພໍ່ຕີສອນລູກ.*

ເພາະວ່າຊາວອິສຣາເອັນບໍ່ເຊື່ອພຣະເຈົ້າວ່າຈະນຳພາເຂົາເຈົ້າ, ພວກເຂົາຈຶ່ງບໍ່ສາມາດເຂົ້າສູ່ແຜ່ນດິນແຫ່ງພຣະສັນຍາໄດ້. ຕາມການພິຈາຣະນາເບິ່ງແລ້ວ, ພຣະເຈົ້າໄດ້ເຮັດໃຫ້ເຂົາເຈົ້າເດີນທາງໄປໃນຖິ່ນແຫ້ງແລ້ງກັນດານເປັນເວລາສີ່ສິບປີຈົນກວ່າລຸ້ນຄົນທີ່ບໍ່ເຊື່ອຟັງນັ້ນໄດ້ຕາຍໄປຈົນກ້ຽງ. ໃນພຣະບັນຍັດສອງ, ພຣະເຈົ້າໄດ້ກະກຽມຄົນລຸ້ນໃໝ່ເຂົ້າໄປໃນແຜ່ນດິນ. ກຸນແຈພາກສ່ວນສຳຄັນຂອງຄຳແນະນຳນີ້ກໍແມ່ນເພື່ອເຕືອນສະຕິເຂົາເຈົ້າກ່ຽວກັບສິ່ງທີ່ພຣະອົງໄດ້ເຮັດເພື່ອເຂົາເຈົ້າ. ມັນຢູ່ໃນຄຳແນະນຳນີ້ພວກເຮົາພົບເຫັນຂໍ້ຄວາມທີ່ອົງພຣະເຢຊູໄດ້ຍົກອອກມາກ່າວ. ພຣະເຈົ້າໄດ້ເຕືອນຊາວອິສຣາເອນສາມສິ່ງທີ່ພຣະອົງໄດ້ປະທານໃຫ້ສຳລັບເຂົາເຈົ້າ.

1. **ພຣະເຈົ້າໄດ້ປະທານຄຳແນະນຳ.** "ພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າໄດ້ນຳພາເຈົ້າໃນການເດີນທາງທັງໝົດ" (ຂໍ້ 2) ໃນຂະນະທີ່ພຣະເຈົ້າສົ່ງພວກເຂົາໄປໃນຖິ່ນແຫ້ງແລ້ງກັນດານເປັນເວລາສີ່ສິບປີ, ພຣະອົງບໍ່ເຄີຍປະຖິ້ມພວກເຂົາ. ມັນເປັນສິ່ງສຳຄັນທີ່ຈະຈື່ຈຳວ່າ, ເຖິງແມ່ນວ່າໃນເວລາທີ່ພວກເຮົາຮູ້ສຶກວ່າພວກເຮົາຢູ່ໂດດດ່ຽວ, ພຣະເຈົ້າຍັງຢູ່ກັບພວກເຮົາ.

2. **ພຣະເຈົ້າໄດ້ປະທານອາຫານ.** ຫຼັງຈາກອິສຣາເອນອອກຈາກເອຢິບ, ພຣະເຈົ້າໄດ້ສັນຍາວ່າຈະປະທານເຂົ້າຈີ່ຈາກສວັນໃຫ້ເຂົາເຈົ້າ. ອາຫານປະຈຳວັນນີ້ເອີ້ນວ່າ ມານາ (ແທ້ຈິງແລ້ວ "ມັນແມ່ນຫຍັງ?" ອົບພະຍົບ 16:15). ສຳລັບສີ່ສິບປີ, ພຣະເຈົ້າໄດ້ປະທານເຂົ້າຈີ່ນີ້ໃນແຕ່ລະວັນຍົກເວັ້ນວັນຊະບາໂຕ. ແລະເຖິງປານນັ້ນ, ອິສຣາເອນກໍສືບຕໍ່ເອົາພຣະເຈົ້າເຂົ້າໃນການທົດລອງໂດຍການຈົ່ມວ່າ.

3. **ພຣະເຈົ້າປະທານວັດຖຸສິ່ງຂອງທີ່ຈຳເປັນແກ່ເຂົາເຈົ້າ.** ບໍ່ພຽງແຕ່ພຣະເຈົ້າໄດ້ລ້ຽງເກືອເຂົາເຈົ້າເທົ່ານັ້ນ, ແຕ່ພຣະອົງຍັງໄດ້ປະທານເສື້ອຜ້າໃຫ້ເຂົາເຈົ້າ. ຢ່າງໜ້າອັສຈັນ, ເຄື່ອງນຸ່ງຂອງພວກເຂົາບໍ່ເສື່ອມໂຊມໃນສີ່ສິບປີເຫຼົ່ານັ້ນ ແລະຕີນຂອງພວກເຂົາກໍບໍ່ໄດ້ໄຂ່ບວມ.

ເມື່ອທ່ານຖືກລໍ້ໃຈໃຫ້ສົງສັຍໃນການຈັດຕຽມຂອງພຣະເຈົ້າ, ທ່ານຄວນຈະເຮັດແນວໃດ? ຈື່ໄວ້ວ່າ! ໃຫ້ເບິ່ງຄືນຊີວິດຂອງທ່ານແລະພິຈາລະນາວິທີທີ່ພຣະເຈົ້າໄດ້ປະທານໃຫ້ແກ່ທ່ານ. ມັນອາດຈະມີຕອນທີ່ມີພຽງເລັກນ້ອຍ, ແລະອາດຈະມີຕອນທີ່ມີຫຼວງຫຼາຍ, ແຕ່ພຣະເຈົ້າໃຫ້ສິ່ງທີ່ທ່ານຕ້ອງການໃນເວລາທີ່ທ່ານຕ້ອງການ. ເມື່ອເຮົາເຂົ້າໃຈວ່າພຣະເຈົ້າສັນຍາວ່າຈະຈັດຫາຄວາມຕ້ອງການພື້ນຖານຂອງປະຊາຊົນຂອງພຣະອົງ, ເຮົາຈະພໍໃຈກັບການຕອບສນອງຂອງພຣະອົງ. ພວກເຮົາຈະ, ພ້ອມກັບອັຄສາວົກໂປໂລ, ຮູ້ຈັກກັບວິທີການຮັບມືກັບຂອງເລັກນ້ອຍຫຼືຂອງຫຼວງຫຼາຍ.

*ເປັນຫຍັງການຈື່ຈຳຈຶ່ງສຳຄັນຫຼາຍໃນການປະເຊີນໜ້າກັບການລໍ້ໃຈ?*

## 3. <u>ພຣະບັນຍັດສອງ 8:6-10</u>

*6. ດັ່ງນັ້ນແຫລະ, ຈົ່ງເຮັດຕາມຄຳຂອງພຣະຜູ້ເປັນເຈົ້າຊົງບອກສອນ ຄືປະພຶດຕາມບົດບັນຍັດຂອງພຣະອົງ ແລະໂຄຣົບຢຳເກງພຣະອົງ. 7. ພຣະຜູ້ເປັນເຈົ້າຈະຊົງນຳພາພວກທ່ານເຂົ້າໄປຍັງແຜ່ນດິນທີ່ມີແມ່ນໍ້າລຳຄອງ ມີນໍ້າອອກບໍ່ ແລະມີນໍ້າບາດານໄຫຼອອກມາແຕ່ຮ່ອມພູ ແລະພູນ້ອຍທັງຫຼາຍມີເຂົ້າບເລ. 8. ເຂົ້າເດືອຍ ກົກອະງຸ່ນ ກົກເດື່ອເທດ ກົກຫມາກພິລາ ນໍ້າມັນຫມາກກອກເທດ ແລະນໍ້າເຜີ້ງ. 9. ຢູ່ທີ່ນັ້ນພວກທ່ານຈະບໍ່ອຶດຫິວ ຫຼືທຳສິ່ງໃດໂດຍໄຮ້ປໂຍດເລີຍ ມັນເປັນແຜ່ນດິນທີ່ມີບໍ່ເຫຼັກ ແລະບໍ່ທອງແດງຫຼາຍ. 10. ພວກທ່ານຈະມີອາຫານກິນຕາມຄວາມຕ້ອງການ ແລະຈະຂອບພຣະຄຸນພຣະຜູ້ເປັນເຈົ້າຂອງພວກທ່ານ ຍ້ອນວ່າພຣະອົງຊົງໂຜດປະທານແຜ່ນດິນທີ່ອຸດົມສົມບູນນີ້ໃຫ້.*

ກ່ອນໜ້ານີ້, ພຣະເຈົ້າໄດ້ໃຫ້ຄຳໝັ້ນສັນຍາທີ່ຈະປະທານໃຫ້ແກ່ໄພ່ພົນຂອງພຣະອົງ. ຖ້າພວກເຂົາເຊື່ອຟັງພຣະຄຳຂອງພຣະອົງແລະຮັກສາພັນທະສັນຍາຂອງພຣະອົງ, ພວກເຂົາຈະເປັນປະຊາຊົນຂອງພຣະອົງ, ພຣະອົງຈະເປັນພຣະເຈົ້າຂອງພວກເຂົາ (ອພຍ 19:5), ແລະ ພຣະອົງຈະໃຫ້ພວກເຂົາມີແຜ່ນດິນທີ່ມີນ້ຳນົມແລະນໍ້າເຜີ້ງ (3:17). ໃນປະຈຸບັນ, ໃນຂະນະທີ່ໂມເຊໄດ້ກະກຽມຄົນລຸ້ນທີສອງນີ້ເພື່ອເຂົ້າໄປໃນແຜ່ນດິນ, ລາວໄດ້ເຕືອນພວກເຂົາໃຫ້ "ຮັກສາຄຳສັ່ງຂອງພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າໂດຍການຍ່າງໄປຕາມທາງຂອງພຣະອົງແລະຢຳເກງພຣະອົງ" (ຂໍ້ 6).

ຜົນປໂຍດຂອງການຢູ່ໃນຄວາມສຳພັນຂອງພັນທະສັນຍາກັບພຣະເຈົ້າແມ່ນເຫັນໄດ້ໃນວິທີທີ່ພຣະອົງຕອບສນອງ. ພຣະເຈົ້າກຳລັງ

ນຳຊາວອິສຣາເອນ "ເຂົ້າໄປໃນດິນແດນທີ່ດີ" ເຊິ່ງທັງງາມແລະອຸດົມສົມບູນ. ພຣະເຈົ້າຈະຈັດຫາທຸກຄວາມຕ້ອງການຂອງເຂົາເຈົ້າ—ຖ້າຫາກເຂົາເຈົ້າຮັກສາພັນທະສັນຍາ.

*ຄຳສັນຍາຂອງພຣະເຈົ້າມີບົດບາດອັນໃດໃນຊີວິດຂອງເຮົາໃນຖານະເປັນຄຣິສະຕຽນ?*

ການຮັກສາພັນທະສັນຍາຂອງເຂົາເຈົ້າແມ່ນສິ່ງທ້າທາຍ! ເຂົາເຈົ້າເຮັດບໍ່ໄດ້. ໃນຄວາມເປັນຈິງ, ພຣະເຈົ້າໄດ້ບອກໂມເຊວ່າອິສຣາເອນຈະທຳລາຍພັນທະສັນຍາ (ພຣະບັນຍັດສອງ 31:16-18). ແຕ່ໂມເຊຍັງບອກຜູ້ຄົນວ່າ ເມື່ອພວກເຂົາກັບຄືນໄປຫາພຣະເຈົ້າໃນການເຊື່ອຟັງ, ພຣະເຈົ້າກໍຈະສ້າງພວກເຂົາຂຶ້ນໃໝ່ຄືກັນ (30:1-10). ພຣະເຈົ້າຈະເຮັດໃຫ້ເຂົາເຈົ້າຈະເລີນຮຸ່ງເຮືອງອີກ, ແລະເຂົາເຈົ້າຈະຮັກພຣະເຈົ້າດ້ວຍສຸດໃຈຂອງເຂົາເຈົ້າແລະມີຊີວິດ.

ພຣະເຢຊູໄດ້ຮັກສາພັນທະສັນຍາສຳລັບພວກເຮົາ. ພວກເຮົາລົ້ມເຫຼວຢ່າງໂສກເສົ້າ, ແຕ່ພຣະເຢຊູດຳເນີນຊີວິດດ້ວຍການເຊື່ອຟັງທີ່ສົມບູນແບບທີ່ເຮົາເຮັດບໍ່ໄດ້. ພຣະເຢຊູໄດ້ສ້າງຕັ້ງພັນທະສັນຍາຂຶ້ນໃໝ່ໂດຍພຣະໂລຫິດຂອງພຣະອົງໄດ້ຫລັ່ງທີ່ໄມ້ກາງແຂນ. ການປະທານໃຫ້ທີ່ຍິ່ງໃຫຍ່ທີ່ສຸດທີ່ພຣະເຈົ້າສເນີໃຫ້ພວກເຮົາແມ່ນລູກຊາຍຂອງພຣະອົງເອງ. ເມື່ອເຮົາມາຫາພຣະເຈົ້າໂດຍຄວາມເຊື່ອໃນພຣະຄຣິດ, ເຮົາເປັນຜູ້ຮັບມໍລະດົກຂອງຄວາມຮັ່ງມີທັງໝົດຂອງພຣະເຈົ້າ. ບໍ່ມີສິ່ງໃດທີ່ພຣະອົງຈະຍຶດເອົາຈາກພວກເຮົາ. ນີ້ກໍບໍ່ໄດ້ໝາຍຄວາມວ່າພວກເຮົາຈະບໍ່ປະສົບກັບເວລາທີ່ຂາດແຄນ. ບາງຄັ້ງພຣະເຈົ້າຕ້ອງການສອນພວກເຮົາໃນຊ່ວງເວລານັ້ນ. ແຕ່ພຣະເຈົ້າກໍຊົງປະທານທຸກສິ່ງທຸກຢ່າງທີ່ເຮົາຕ້ອງການສຳລັບຊີວິດແລະຄວາມເປັນພຣະເຈົ້າ.

*ພວກເຮົາສາມາດຮຽນຮູ້ຫຍັງຈາກຂໍ້ພຣະຄຳພີເຫຼົ່ານີ້ກ່ຽວກັບການປະເຊີນໜ້າກັບການລໍ້ລວງ?*

## ນຳໃຊ້ໃນຊີວິດ

ການປະທານໃຫ້ຂອງພຣະເຈົ້າແມ່ນດີກວ່າສິ່ງທີ່ພວກເຮົາພະຍາຍາມເຮັດເພື່ອເຮົາເອງສເມີ. ເລືອກນຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

❖ **ຫົວໃຈກະຕັນຍູ.** ວິທີນຶ່ງທີ່ເຮົາສາມາດຕໍ່ສູ້ກັບການລໍ້ລວງຂອງຊາຕານທີ່ສົງສັຍການຈັດຕຽມຂອງພຣະເຈົ້າແມ່ນໂດຍການຂອບພຣະຄຸນສຳລັບທຸກສິ່ງທີ່ພຣະເຈົ້າໄດ້ຈັດຫາໃຫ້ເຮົາ. ໃຊ້ເວລາຄາວນຶ່ງເພື່ອນັບພຣະພອນຂອງທ່ານແລະຂອບພຣະຄຸນສຳລັບການຕອບສນອງຂອງພຣະເຈົ້າ.

❖ **ຫົວໃຈທີ່ໄວ້ວາງໃຈ.** ພຣະເຈົ້າຈະຈັດໃຫ້ດັ່ງທີ່ພວກເຮົາໄວ້ວາງໃຈພຣະອົງ. ລະຫວ່າງເວລານີ້ແລະເວລາທີ່ພຣະອົງສນອງ, ລໍຖ້າແລະໄວ້ວາງໃຈ. ພຣະເຈົ້າຈະສນອງສິ່ງທີ່ທ່ານຕ້ອງການໃນເວລາທີ່ສົມບູນແບບຂອງພຣະອົງ. ໄວ້ວາງໃຈພຣະອົງເພື່ອເສີມຂະຫຍາຍຄວາມເຊື່ອຂອງທ່ານໃນຂນະທີ່ທ່ານລໍຖ້າ.

❖ **ຫົວໃຈເອື້ອເຟື້ອເພື່ອແຜ່.** ເມື່ອເຮົາສົງສັຍໃນການປະທານໃຫ້ຂອງພຣະເຈົ້າ ເຮົາກໍຢາກໄດ້ສິ່ງທີ່ຄົນອື່ນມີ. ພວກເຮົາຍັງສາມາດຖືກດຶງດູດໄປສູ່ວັດຖຸນິຍົມ, ການເອື້ອເຟື້ອເພື່ອແຜ່ແມ່ນກຸນແຈເພື່ອຕໍ່ສູ້ກັບຄວາມໂລບແລະວັດຖຸນິຍົມ. ຂນະທີ່ທ່ານວາງໃຈພຣະເຈົ້າໃນການປະທານສິ່ງທີ່ທ່ານຕ້ອງການ, ຈົ່ງເຕັມໃຈທີ່ຈະໃຫ້ແລະເປັນທໍ່ຂອງການສນອງຂອງພຣະອົງໃຫ້ແກ່ຜູ້ອື່ນ.

ມັນມີສຽງຫຼວງຫຼາຍດັງຢູ່ຂ້າງນອກທີ່ພາໃຫ້ເຮົາເພິ່ງພາຕົວເອງ. ໃນບາງທາງ, <u>ຕົວເອງເປັນເທບພຣະເຈົ້າທີ່ແນບນຽນທີ່ສຸດ</u>. ແຕ່ຖ້າເຮົາເຮັດຕາມຕົວຢ່າງຂອງພຣະເຢຊູ, ດ້ວຍຄວາມເຂັ້ມແຂງຂອງພຣະອົງ, ເຮົາກໍສາມາດເອົາຊະນະການລໍ້ລວງນີ້ໄດ້ເຊັ່ນກັນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PA**